**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 42 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 11 / 21

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ປະຈໍາປີ 2020 ແລະ ການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ 10 ເດືອນ, ຄາດຄະເນປະຕິບັດໝົດປີ 2021 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2022.

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2.2 ແລະ ມາດຕາ 59 ຂໍ້ 1;
- ອີງຕາມ ບົດລາຍງານຂອງລັດຖະບານ ສະບັບເລກທີ 5467/ກງ, ລົງວັນທີ 02 ພະຈິກ 2021 ກ່ຽວກັບ ການສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈໍາປີ 2020, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 10 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2022.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2020, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 10 ເດືອນ, ຄາດຄະເນປະຕິບັດໝົດປີ 2021 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2022 ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນວັນທີ 1 ພະຈິກ 2021.

### ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານ ຂອງລັດຖະບານ ກ່ຽວກັບ ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ປະຈໍາປີ 2020, ການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ 10 ເດືອນ ແລະ ຄາດຄະເນປະຕິບັດ ໝົດປີ 2021:

ກອງປະຊຸມສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ລັດຖະບານ ທີ່ໄດ້ເອົາໃຈໃສ່ຊີ້ນໍາໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ເຫັນດີຕໍ່ເນື້ອໃນບົດລາຍງານ ດັ່ງນີ້:

1. ການສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈໍາປີ 2020:
   1) ດ້ານລາຍຮັບ: ປະຕິບັດໄດ້ 22.975 ຕື້ກີບ ເທົ່າກັບ 101,10% ຂອງແຜນການປີ (ອີງການກວດສອບແຫ່ງລັດກວດເຫັນລາຍຮັບເພີ່ມ 170,11 ຕື້ກີບ);

2) ດ້ານລາຍຈ່າຍ: ປະຕິບັດໄດ້ 30.855 ຕື້ກີບ ເທົ່າກັບ 92,68% ຂອງແຜນການປີ (ອີງການກວດສອບແຫ່ງລັດ ກວດເຫັນລາຍຈ່າຍເພີ່ມ 96,39 ຕື້ກີບ);

3) ດ້ານດຸນດ່ຽງ: ປະຕິບັດໄດ້ 7.879 ຕື້ກີບ ເທົ່າກັບ 74,56% ຂອງແຜນການປີ ຫຼື ເທົ່າກັບ 4,48% ຂອງ GDP, ມູນຄ່າ GDP ເທົ່າກັບ 175.720 ຕື້ກີບ (ອີງການກວດສອບແຫ່ງລັດ ກວດເຫັນຂາດດຸນ 7.806,28 ຕື້ກີບ ເທົ່າກັບ 4,44% ຂອງ GDP).

2. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 10 ເດືອນ ແລະ ຄາດຄະເນໝົດປີ 2021:

1) ດ້ານລາຍຮັບ: ປະຕິບັດໄດ້ 20.436 ຕື້ກີບ ເທົ່າກັບ 74% ຂອງແຜນການປີ, ໃນນັ້ນ ລາຍຮັບພາຍໃນປະຕິບັດໄດ້ 17.934 ຕື້ກີບ ເທົ່າກັບ 71% ຂອງແຜນການປີ ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ 2.503 ຕື້ກີບ ເທົ່າກັບ 103% ຂອງແຜນການປີ. ຄາດຄະເນໝົດປີ ຈະປະຕິບັດໄດ້ 26.957 ຕື້ກີບ ເທົ່າກັບ 98% ຂອງແຜນການປີ;

2) ດ້ານລາຍຈ່າຍ: ປະຕິບັດໄດ້ 19.012 ຕື້ກີບ ເທົ່າກັບ 60% ຂອງແຜນການປີ, ຄາດຄະເນໝົດປີ ຈະປະຕິບັດໄດ້ 100%;

3) ຂາດດຸນງົບປະມານ: ຄາດຄະເນຂາດດຸນໝົດປີ 4.626 ຕື້ກີບ ເທົ່າກັບ 2,53% ຂອງ GDP (ມະຕິສະພາແຫ່ງຊາດ 3.955 ຕື້ກີບ ເທົ່າກັບ 2,17%, ມູນຄ່າ GDP 182.603 ຕື້ກີບ).

4) ແຫຼ່ງດຸນດ່ຽງ: ແຫຼ່ງທຶນເພື່ອມາດຸນດ່ຽງທັງໝົດ 18.701 ຕື້ກີບ, ໃນນັ້ນ:

- ດຸນດ່ຽງງົບປະມານ: 4.626 ຕື້ກີບ;
- ທົດແທນຕົ້ນທຶນເງິນກູ້: 14.075 ຕື້ກີບ.

ກອງປະຊຸມເຫັນດີໂດຍພື້ນຖານຕໍ່ການຕີລາຄາ ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ມາດຕະການ ແລະ ແຜນການຈຸດສຸມທ້າຍປີ 2021 ທີ່ລັດຖະບານ ໄດ້ສະເໜີຕໍ່ກອງປະຊຸມຄັ້ງນີ້.

**ມາດຕາ 2 ຮັບຮອງເອົາແຜນງົບປະມານແຫ່ງລັດ ປະຈຳປີ 2022**

ກອງປະຊຸມຮັບຮອງເອົາແຜນງົບປະມານແຫ່ງລັດ ປະຈຳປີ 2022 ຕາມການສະເໜີ ຂອງລັດຖະບານ, ຊຶ່ງເປັນແຜນງົບປະມານແຫ່ງລັດ ທີ່ສ້າງທ່າຂັ້ນປ່ຽນບຸກທະລຸດ້ານລາຍຮັບງົບປະມານຢ່າງແຂງແຮງ, ສາມາດຮັບປະກັນລາຍຈ່າຍທີ່ຈຳເປັນຂອງລັດຖະບານ, ພ້ອມທັງສ້າງຄວາມສົມດຸນ ເຮັດໃຫ້ລາຍຮັບພາຍໃນກຸ້ມລາຍຈ່າຍພາຍໃນ ແລະ ຍັງມີສ່ວນເຫຼືອໄວ້ ເພື່ອຊຳລະໜີ້ສິນ, ດັ່ງນີ້:

1. ລາຍຮັບທັງໝົດ — 31.593 ຕື້ກີບ ເທົ່າກັບ 16,44% ຂອງ GDP, ເພີ່ມຂຶ້ນ 14,35% ທຽບໃສ່ມະຕິ ປີ 2021 (ມູນຄ່າ GDP ເທົ່າກັບ 192.145 ຕື້ກີບ), ໃນນັ້ນ:

   1) ລາຍຮັບພາຍໃນ — 28.963 ຕື້ກີບ ເທົ່າກັບ 15,07% ຂອງ GDP, ໃນນັ້ນ ພູດລາຍຮັບສູນກາງ 23.058 ຕື້ກີບ, ພູດລາຍຮັບທ້ອງຖິ່ນ 5.905 ຕື້ກີບ;

   2) ລາຍຮັບການຊ່ວຍເຫຼືອລ້າ — 2.460 ຕື້ກີບ ເທົ່າກັບ 1,28% ຂອງ GDP;

   3) ລາຍຮັບຈາກຜົນການກວດສອບ ເຫັນເພີ່ມ ປີ 2020 ຈຳນວນ 170,11 ຕື້ກີບ.

2. ລາຍຈ່າຍທັງໝົດ 34.691 ຕື້ກີບ ເທົ່າກັບ 18,05% ຂອງ GDP, ເພີ່ມຂຶ້ນ 9,84% ທຽບໃສ່ມະຕິ ປີ 2021, ໃນນັ້ນ:

1) ລາຍຈ່າຍບໍລິຫານປົກກະຕິ 23.991,39 ຕື້ກີບ ເທົ່າກັບ 12,49% ຂອງ GDP, ໃນນັ້ນ: ຈັດສັນໃຫ້ ສູນກາງ 16.557,050 ຕື້ກີບ ແລະ ທ້ອງຖິ່ນ 7.434,340 ຕື້ກີບ ຕາມລາຍລະອຽດ ດັ່ງນີ້:

- ເງິນເດືອນ ແລະ ເງິນອຸດໜູນ 11.500 ຕື້ກີບ;
- ເງິນນະໂຍບາຍ ແລະ ເງິນຊ່ວຍໜູນ 1.820 ຕື້ກີບ;
- ເງິນບໍລິຫານປົກກະຕິ 2.540 ຕື້ກີບ;
- ເງິນຕັດສົມ, ສິ່ງເສີມ ຊ່ວຍໜູນ, ບຳລຸງ 1.520 ຕື້ກີບ;
- ລາຍຈ່າຍການເງິນ 5.770 ຕື້ກີບ;
- ເງິນຊື້ຊັບສິນບັດຄົງທີ່ 95 ຕື້ກີບ;
- ລາຍຈ່າຍບັງເອີນອື່ນໆ 746,39 ຕື້ກີບ, ໃນນັ້ນ ລາຍຈ່າຍຈາກຜົນການກວດສອບເຫັນເພີ່ມ ໃນປີ 2020 ຈຳນວນ 96,39 ຕື້ກີບ.

2) ລາຍຈ່າຍລົງທຶນ 10.700 ຕື້ກີບ ເທົ່າກັບ 5,57% ຂອງ GDP; ໃນນັ້ນ:

- ລາຍຈ່າຍລົງທຶນຕ່າງປະເທດເປັນໂຄງການ 6.750 ຕື້ກີບ, ໃນນັ້ນ:
  + ລາຍຈ່າຍຊ່ວຍເຫຼືອລ້າເປັນໂຄງການ 2.460 ຕື້ກີບ;
  + ລາຍຈ່າຍກູ້ຢືມເປັນໂຄງການ 4.290 ຕື້ກີບ.
- ລາຍຈ່າຍການລົງທຶນພາຍໃນ 3.950 ຕື້ກີບ ໃນນັ້ນ:
  + ລົງທຶນບ້ອງອື່ນໆ 1.750 ຕື້ກີບ.
  + ລົງທຶນປົກກະຕິ 2.200 ຕື້ກີບ (ລວມເງິນຟື້ນຟູໄພພິບັດ), ໃນນັ້ນ: ຈັດສັນໃຫ້ສູນກາງ 41% ແລະ ທ້ອງຖິ່ນ 59% (ການຈັດສັນລາຍຈ່າຍລົງທຶນລະອຽດ ໄດ້ກຳນົດໄວ້ໃນຕາຕະລາງແຜນການລົງທຶນຂອງລັດ).

3. ການຂາດດຸນງົບປະມານ: ຈຳນວນ 3.098 ຕື້ກີບ ເທົ່າກັບ 1,61% ຂອງ GDP, ຫຼຸດລົງ 21,67% ທຽບໃສ່ມະຕິ ປີ 2021 (ມູນຄ່າ GDP ເທົ່າກັບ 192.145 ຕື້ກີບ).

4. ພາກດຸນດ່ຽງ:

4.1 ຄວາມຕ້ອງການແຫຼ່ງທຶນທັງໝົດ 19.998 ຕື້ກີບ, ໃນນັ້ນ:

- ການດຸນດ່ຽງງົບປະມານ 3.098 ຕື້ກີບ;
- ທົດແທນຄືນຕົ້ນທຶນເງິນກູ້ຢືມ 16.900 ຕື້ກີບ, ໃນນັ້ນ:
  + ທົດແທນຄືນຕົ້ນທຶນເງິນກູ້ຢືມພາຍໃນ 5.100 ຕື້ກີບ;
  + ທົດແທນຄືນຕົ້ນທຶນເງິນກູ້ຢືມຕ່າງປະເທດ 11.800 ຕື້ກີບ.

4.2 ແຫຼ່ງທຶນເພື່ອດຸນດ່ຽງທັງໝົດ 19.998 ຕື້ກີບ, ໃນນັ້ນ:

- ກູ້ຢືມພາຍໃນ 6.926 ຕື້ກີບ;
- ກູ້ຢືມຈາກຕ່າງປະເທດ 13.072 ຕື້ກີບ, ໃນນັ້ນ:
  + ກູ້ຢືມເປັນໂຄງການ 8.782 ຕື້ກີບ;
  + ກູ້ຢືມພາກດຸນດ່ຽງ 4.290 ຕື້ກີບ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ປະຈໍາປີ 2022**

ກອງປະຊຸມຮັບຮອງເອົາ 9 ມາດຕະການ ຕາມການສະເໜີຂອງ ລັດຖະບານ, ພ້ອມນັ້ນ ກອງປະຊຸມ ສະເໜີໃຫ້ປະຕິບັດນະໂຍບາຍການເງິນ-ງົບປະມານໃຫ້ຮັດກຸມ ແລະ ເອົາໃຈໃສ່ບາງມາດຕະການ ຕົ້ນຕໍ ແລະ ເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ຈັດຕັ້ງຜັນຂະຫຍາຍ ບັນດາກົດໝາຍ, ມະຕິ ສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ບັນດານິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ ຂອງລັດຖະບານ ໂດຍສະເພາະ ຄຳສັ່ງ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານ, ເປັນຕົ້ນ:
   1) ຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນ ໂດຍເພີ່ມທະວີການອັດຊ່ອງຫວ່າງການຮົ່ວໄຫຼຂອງບັນດາຖານລາຍຮັບ ຈາກການນໍາເຂົ້ານໍ້າມັນເຊື້ອໄຟ, ວັດສະດຸກໍ່ສ້າງ, ເຄື່ອງໄຟຟ້າ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ອື່ນໆ ໃຫ້ເຂັ້ມງວດ ແລະ ເດັດຂາດ;
   2) ສືບຕໍ່ປັບປຸງ ລະບົບພາສີ, ການເສຍພາສີຍ່ອຍ ຢູ່ບັນດາດ່ານຊາຍແດນ ໃນຂອບເຂດທົ່ວປະເທດ, ເອົາໃຈໃສ່ຕິດຕາມບໍລິສັດ ຂາເຂົ້າ-ຂາອອກ ແລະ ຜູ້ບໍລິການແຈ້ງເສຍພາສີທີ່ເຄື່ອນໄຫວບໍ່ຖືກຕ້ອງ ໂດຍໃຫ້ສ້າງຕັ້ງເປັນນິຕິບຸກຄົນ ແລະ ມີສັນຍາຄໍ້າປະກັນກັບລັດຖະການພາສີ ເພື່ອແກ້ໄຂການສົມຮູ້ຮ່ວມຄິດການຄ້າຂາຍເຖື່ອນ ແລະ ການລົບຫຼີກການເສຍພາສີ-ອາກອນ ຢູ່ບັນດາດ່ານຊາຍແດນທົ່ວປະເທດ, ສືບຕໍ່ດໍາເນີນມາດຕະການແກ້ໄຂລົດນໍາເຂົ້າ ແລະ ສິນຄ້າຄ້າງສາງທີ່ບໍ່ຖືກຕ້ອງ ໃຫ້ສໍາເລັດໂດຍໄວ;
   3) ສືບຕໍ່ຕິດຕາມ ແລະ ມີມາດຕະການແກ້ໄຂບໍລິສັດ ບໍລິການບັນຊີ ແລະ ບໍລິສັດກວດສອບບັນຊີ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມມາດຕະຖານ ເພື່ອຊຸກຍູ້ໃຫ້ຫົວໜ່ວຍທຸລະກິດຖືບັນຊີ ແລະ ດໍາເນີນການກວດສອບ ໃຫ້ຖືກຕ້ອງຄົບຖ້ວນຕາມກົດໝາຍ.

2. ດ້ານລາຍຮັບ:
   1) ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການກວດຄືນ ແລະ ມອບລາຍຮັບຈາກຜົນການກວດສອບເຫັນເພີ່ມ ປີ 2020 ຈໍານວນ 170,11 ຕື້ກີບ ເພື່ອເອົາເຂົ້າແຜນລາຍຮັບງົບປະມານຂອງ ປີ 2022;
   2) ສູ້ຊົນເພີ່ມລາຍຮັບພາຍໃນ ໃຫ້ໄດ້ຕື່ມ 0,1% ຂອງ GDP (ເປັນເງິນຈໍານວນບໍ່ຫຼຸດ 192 ຕື້ກີບ) ຈາກ 15,07% ເປັນ 15,17% ຂອງ GDP;
   3) ເລັ່ງທວງ ແລະ ເກັບຄືນ ບັນດາໜີ້ຕ້ອງຮັບທີ່ຄ້າງມອບ, ລາຍຮັບທີ່ກວດເຫັນເພີ່ມ ໃນປີ 2020 ແລະ ສະສົມຕາມຜົນການກວດສອບ; ເອົາໃຈໃສ່ເກັບລາຍຮັບທີ່ມີຖານໝັ້ນຄົງແນ່ນອນ ເປັນຕົ້ນ: ພາສີນໍາເຂົ້າສິນຄ້າ, ອາກອນ ທີ່ດິນ, ແຮ່ທາດ, ຄ່າທໍານຽມ ແລະ ຄ່າບໍລິການ, ຄ່າເຊົ່າ-ສໍາປະທານ ໃຫ້ຄົບຖ້ວນຕາມກົດໝາຍ;
   4) ກວດຄືນ ແລະ ຈັດເກັບລາຍຮັບ ຈາກບັນດາບໍລິສັດ ທີ່ໄດ້ຮັບອະນຸຍາດຂຸດຄົ້ນ ແລະ ມີແຜນການສົ່ງອອກ ແຮ່ເຫຼັກ ແລະ ບົດຄອຍ ໃຫ້ໄດ້ຕາມແຜນ;
   5) ສືບຕໍ່ສໍາຫຼວດຖານລາຍຮັບໃໝ່ໃຫ້ຄົບຖ້ວນຖືກຕ້ອງ ແລະ ມີຄວາມຊັດເຈນ ໂດຍສະເພາະ ຈາກທຸລະກິດ ທີ່ຕິດພັນກັບການນໍາໃຊ້ທາງລົດໄຟ ລາວ-ຈີນ;
   6) ສືບຕໍ່ປະຕິຮູບ ວິສາຫະກິດລັດ ທີ່ດໍາເນີນທຸລະກິດ ຂາດທຶນຕໍ່ເນື່ອງ ເປັນເວລາຫຼາຍປີ ໃຫ້ມີປະສິດທິຜົນ, ມີກໍາໄລ ແລະ ປະກອບສ່ວນລາຍຮັບ ເຂົ້າງົບປະມານແຫ່ງລັດ.

3. ດ້ານລາຍຈ່າຍ:

1) ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການກວດຄືນ ແລະ ແກ້ໄຂລາຍຈ່າຍຈາກການກວດສອບເຫັນເພີ່ມ ປີ 2020 ຈຳນວນ 96,39 ຕື້ກີບ ເພື່ອໄລ່ລຽງ ແລະ ຈັດສັນເຂົ້າແຜນລາຍຈ່າຍງົບປະມານຂອງ ປີ 2022;
2) ຮີບຮ້ອນຈັດສັນ ແລະ ແຈ້ງແຜນລາຍຈ່າຍງົບປະມານບໍລິຫານປົກກະຕິ ແລະ ລົງທຶນຂອງລັດ ໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ໃຫ້ສຳເລັດກ່ອນ ວັນທີ 31 ທັນວາ 2021 ເພື່ອໃຫ້ທັນນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ;
3) ເອົາໃຈໃສ່ປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟຸມເຟືອຍງົບປະມານແຫ່ງລັດ, ປະຕິບັດຄຳສັ່ງວ່າດ້ວຍ ມັດລັດ ໃຫ້ເປັນຮູບປະທຳ, ສືບຕໍ່ການເຮັດທົດລອງ 5 ຫົວໜ່ວຍວິຊາການກຸ້ມຕົນເອງ ດ້ານງົບປະມານ ເພື່ອເປັນພື້ນຖານ ຜັນຂະຫຍາຍໃຫ້ໄດ້ຫຼາຍຂຶ້ນ ແລະ ຫຼຸດຜ່ອນລາຍຈ່າຍພາກລັດລົງເປັນກ້າວໆ;
4) ຈັດສັນງົບປະມານບໍລິຫານປົກກະຕິ ໃຫ້ຂະແໜງສາທາລະນະສຸກ ໃຫ້ທັນການ ໂດຍສະເພາະ ກອງທຶນປະກັນສຸຂະພາບ 180 ຕື້ກີບ ແລະ ການປະຕິບັດນະໂຍບາຍຕໍ່ ແພດໝໍ ແລະ ພະນັກງານລັດຖະກອນ ທີ່ປະຕິບັດໜ້າທີ່ໂດຍກົງໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ພຽງພໍ;
5) ປະຕິບັດແຜນການຈັດສັນງົບປະມານລົງທຶນປົກກະຕິໃຫ້ແກ່ໂຄງການທີ່ຈຳເປັນ ແລະ ເປັນບຸລິມະສິດສຳລັບຂະແໜງການສຶກສາທິການ ແລະ ກິລາ ເພື່ອຮັບໃຊ້ໃຫ້ແກ່ການຮຽນ-ການສອນ ແບບທາງໄກໃຫ້ມີຄຸນນະພາບ ແລະ ສຸມທຶນເຂົ້າໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄປຕາມທິດສາມສ້າງ ແລະ ຄຳສັ່ງແນະນຳຂອງສູນກາງພັກ ໃຫ້ທັນກຳນົດເວລາ.

4. ດ້ານການດຸ່ນດ່ຽງ:

1) ຮັບປະກັນການສະກົມແຫຼ່ງທຶນດຸ່ນດ່ຽງງົບປະມານ ເພື່ອປະຕິບັດລາຍຈ່າຍງົບປະມານໃຫ້ໄປຕາມແຜນ;
2) ຄົ້ນຄວ້າການສະກົມແຫຼ່ງທຶນ ເພື່ອມາດຸ່ນດ່ຽງງົບປະມານ ແລະ ຊຳລະໜີ້ສິນດ້ວຍຫຼາຍຮູບການໂດຍສະເພາະ ການອອກພັນທະບັດພາຍໃນ, ການກູ້ຢືມຈາກແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຈະແຈ້ງ, ມີຄວາມແນ່ນອນ ແລະ ມີຄວາມຍືນຍົງ ໃຫ້ຢູ່ໃນກອບເພດານລວມ ຂອງມະຕິສະພາແຫ່ງຊາດ, ຫຼຸດຜ່ອນການສ້າງໜີ້ສິນເພີ່ມໃໝ່ ແລະ ແກ້ໄຂໜີ້ສິນທີ່ມີໃຫ້ຫຼຸດລົງເທື່ອລະກ້າວ.

5. ດ້ານການບໍລິຫານຄຸ້ມຄອງ:

1) ສ້າງແຜນການຄຸ້ມຄອງງົບປະມານໃຫ້ເປັນລະບົບ, ຮັບປະກັນລາຍຮັບພາຍໃນກຸ່ມລາຍຈ່າຍ, ມີແຫຼ່ງການຊຳລະການຂາດດຸນງົບປະມານທີ່ຊັດເຈນ, ຕ້ານການຮົ່ວໄຫຼ, ຍົກສູງປະສິດທິພາບ ແລະ ປະສິດທິຜົນ ກົນໄກການບໍລິຫານການເງິນແຫ່ງລັດ ໃຫ້ດີຂຶ້ນ;
2) ດຳເນີນການປະຕິຮູບ ວິສາຫະກິດລັດລົງທຶນ ຈຳນວນໜຶ່ງ ໃຫ້ສຳເລັດໂດຍໄວ ເປັນຕົ້ນ: ບໍລິສັດ ໄຟຟ້າລາວ, ໄຟຟ້າລາວມະຫາຊົນ, ຊີມັງລາວ, ນ້ຳມັນເຊື້ອໄຟລາວ ແລະ ການບິນລາວ ທີ່ຂາດສະພາບຄ່ອງ ແລະ ດຳເນີນທຸລະກິດຂາດທຶນຕໍ່ເນື່ອງເປັນເວລາຫຼາຍປີ ໃຫ້ມີຄວາມເຂັ້ມງວດ ແລະ ເດັດຂາດ ເພື່ອຮັບປະກັນໃຫ້ການດຳເນີນທຸລະກິດມີປະສິດທິຜົນ ສ້າງກຳໄລ ແລະ ມອບລາຍຮັບເຂົ້າງົບປະມານແຫ່ງລັດ;
3) ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງ, ມີຈັນຍາບັນ-ຈັນຍາທຳ ເພື່ອຮັບປະກັນການປະຕິບັດໜ້າທີ່ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ.

ມາດຕາ 4 ການຈັດຕັ້ງປະຕິບັດ

1. ມອບໃຫ້ລັດຖະບານຊີ້ນຳບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 5 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ